# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ ມິຖຸນາ-17, 2007 ( 06-17-2007 )

---

## <u>ຈົ່ງຈຳໄວ້ວ່າອົງພຣະຜູ້ເປັນເຈົ້າແມ່ນພຣະເຈົ້າ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ພຣະບັນຍັດສອງ 8:1-14, 17-18

**<u>ຄຳຖາມແຫ່ງຊີວິດ:</u>** ເຮັດແນວໃດຈຶ່ງຈະຮູ້ແນ່ວ່າຂ້າພະເຈົ້າຍັງສັດຊື່ຕໍ່ອົງພຣະຜູ້ເປັນເຈົ້າຢູ່?

**<u>ຄວາມຈິງໃນພຣະຄັມພີ:</u>** ອົງພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າ, ແລະບັນດາໄພ່ພົນຂອງພຣະອົງຕ້ອງຈົດຈຳໄວ້ວ່າພຣະອົງເປັນພຣະເຈົ້າທັງໃນສະພາບການທີ່ຫຍຸ້ງຍາກ ແລະໃນສະພາບການທີ່ສະດວກສະບາຍດ້ວຍ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂຶ້ນມາເພື່ອຊ່ອຍທ່ານໃຫ້ມີຄວາມສາມັກຄີທັມອັນດູດດື່ມຕໍ່ພຣະເຈົ້າໂດຍ:

- ບັນຍາຍຫລັກຖານທີ່ສະແດງວ່າທ່ານໄດ້ເປັນຄົນຈົງຮັກພັກດີຕໍ່ພຣະເຈົ້າ
- ສັຣເສີນທີ່ພຣະເຈົ້າໄດ້ຊົງສັ່ງສອນທ່ານ ແລະແລະເຊັ່ນດຽວກັນກໍສັຣເສີນທີ່ພຣະອົງໄດ້ຈັດຫາທຸກຢ່າງໃຫ້ແກ່ທ່ານ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**<u>ແຜນການສອນ</u>**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ.

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ.
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ທີ່ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ.
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ.
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ.
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ.

### <u>ບົດນຳ:</u>

1. ນຳພານັກຮຽນ ສົນທະນາເຣື່ອງ "**ຄວາມເຊື່ອຢ່າງເຕັມປ່ຽມ**" ຂອງຄົນບາງຄົນໃຫ້ໄດ້ຄວາມໝາຍ.
2. ຊອກຫາຍົກເອົາຕົວຢ່າງຂອງຄົນທີ່ບໍ່ເຊື່ອມາວ່າບັນຫາຂອງ ແລະເຫດຜົນຂອງເຂົາເປັນຢ່າງໃດ
3. ພວກເຮົາຈະເຊື່ອໄດ້ຢ່າງໃດຖ້າພວກເຮົາບໍ່ເບິ່ງສິ່ງທີ່ພຣະອົງຊົງສັ່ງສອນ.

### 1. <u>ທ່ານໄດ້ຮຽນຈາກການຕີສອນຂອງພຣະເຈົ້າບໍ່?:</u> ( ພບຢ 8:1-5)

1) ຂໍໃຫ້ນັກຮຽນອາສາສມັກອ່ານ ພບຢ 8:1-5

໒) **ການໜູນໃຈ:** ໃຫ້ນັກຮຽນເວົ້າເຣື່ອງຄົນທີ່ເຂົາເຈົ້າຮູ້ ວ່າໃຜທີ່ດຳເນີນຊີວິດທີ່ຖືກຕ້ອງຕາມບົດຮຽນນີ້ ແລະການກະທຳຂອງເຂົາແຕ່ລະວັນດ້ວຍ.

- ທຸກຄົນທີ່ເຊື່ອຕ້ອງຖ່ອມຕົວຕາມທີ່ພຣະເຈົ້າໄດ້ຊົງສັ່ງສອນ.
- ໃຫ້ຮູ້ວ່າພຣະເຈົ້າຊົງເປັນພຣະເຈົ້າທັງໃນຍາມມີປັນຫາ ແລະໃນຍາມສຸກສະບາຍ.

໓) **ອະທິບາຍ:** ພຣະເຈົ້າຊົງດູແລຄວາມສັມພັນລະຫວ່າງພວກເຮົາກັບພຣະອົງ, ສິ່ງສຳຄັນຫລາຍກວ່ານັ້ນ ພຣະອົງຍັງປະທານທຸກຢ່າງທາງດ້ານຄວາມຕ້ອງການຝ່າຍຮ່າງການຂອງພວກເຮົາດ້ວຍ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ໄບຢ 8:1-5

1. ແມ່ນຫຍັງເປັນຄຸນສົມບັດຂອງການຈົດຈຳ, ການເຊື່ອຖື ແລະການຍອມທຳຕາມພຣະເຈົ້າ?
2. ແມ່ນໃຜ ແລະແມ່ນຫຍັງທີ່ພຣະເຈົ້າໃຫ້ໃຊ້ຄວາມຖ່ອມຕົວຕໍ່ທ່ານ?
3. ການຝຶກຝົນປະເພດໃດທີ່ທ່ານໄດ້ເຮັດໃຫ້ມີຄວາມເຊື່ອທີ່ເຂັ້ມແຂງ?
4. ມີບົດຮຽນຣະບຽບວິນັຍອັນໃດທີ່ພຣະເຈົ້າຊົງສອນ ແລະທ່ານບໍ່ເຕັມໃຈຮັບ?
5. ທ່ານຈະເຮັດແນວໃດຕໍ່ການຕີສອນຂອງພຣະເຈົ້າທີ່ສັ່ງສອນທ່ານ?

## ໒. <u>ທ່ານໄດ້ໄວ້ວາງໃຈໃນພຣະປະສົງຂອງພຣະເຈົ້າບໍ່?:</u> ພບຢ 8:6-10

໑) ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ພບຢ 8:6-10

໒) **ແນະນຳ:** ຄົ້ນຄວ້າເຖິງຄວາມແຕກຕ່າງຂອງ ການຢ້ານຢຳພຣະເຈົ້າ ກັບຢ້ານຢຳອັນຕລາຍໂລກນີ້ໂດຍ ໃຊ້ຄຳດັ່ງກ່າວນີ້: **ຕິດຕາມພຣະທັມ, ໃຫ້ກຽດ, ຍອມທຳຕາມ ແລະບໍ່ຮູ້ຈັກ.**

**ຄຳຖາມ:** 1. ພຣະເຈົ້າຍັງໄດ້ຊົງສັນຍາວ່າຈະປະທານແຜ່ນດິນແຫ່ງຄຳສັນຍາໃຫ້ແກ່ພວກເຮົາໃນສມັຍ ນີ້ຢູ່ບໍ່? ( ເບິ່ງໃນ ພຣະທັມ 1 ໂກຣິນໂທ ໒:9-10) ຈະໄດ້ໃຈຄວາມ. **ຈື່ໄດ້ບໍ່ວ່າພຣະເຈົ້າໄດ້ຊົງປະທານ ແຜ່ນດິນແຫ່ງຄຳສັນຍາໃຫ້ຊົນຊາດອິສຣາເອນນັ້ນເປັນພາກສ່ວນໃນຈຸດປະສົງຂອງພຣະອົງທີ່ແນ່ນອນ.**

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ພບຢ 8:6-10

1. ສາມຢ່າງທີ່ທ່ານຈະຕ້ອງຝຶກຝົນນັ້ນແມ່ນຫຍັງ? ( ຂໍ້ທີ 6 )
2. ໃນຂໍ້ທີ 7 ເຖິງ ຂໍ້ທີ 9 ພຣະເຈົ້າໄດ້ປະທານຫຍັງໃຫ້ແດ່, ພຣະອົງຊົງອວຍພອນໃນຊີວິດຂອງທ່ານຢ່າງໃດ?
3. ໃນລະຫວ່າງທີ່ທ່ານເຊື່ອໄວ້ວາງໃຈໃນພຣະເຈົ້າຢູ່ນັ້ນ ພຣະເຈົ້າໄດ້ປົກປ້ອງຄຸ້ມຄອງທ່ານຈາກສິ່ງຊົ່ວຮ້າຍ ແລະຮັກສາທ່ານບໍ່ໃຫ້ພົບກັບສິ່ງຊົ່ວຮ້າຍນັ້ນແມ່ນຫຍັງ?

## 3. <u>ທ່ານໄດ້ຈົດຈຳບໍ່ເກີດແຫ່ງຄວາມສຳເຣັດຂອງທ່ານບໍ່?:</u> ພບຢ 8:11-14,17-18

໑) ຂໍໃຫ້ນັກຮຽນອາສາສມັກອ່ານ ພບຢ 8:11-14,17-18

໒) ສົນທະນາເຣື່ອງຄວາມສຳເຣັດ ໃນການສັມພັນກັບພຣະເຈົ້າທີ່ເປັນການຍາກລຳບາກ.

໓) ຍົກເອົາຕົວຢ່າງນຶ່ງ ຫລື ສອງຄົນໃນຫ້ອງຮຽນທີ່ພຣະເຈົ້າອວຍພອນຫລາຍທີ່ສຸດ ເຊັ່ນ: ຊີວິດການເປັນຢູ່ ການປົກປ້ອງຄຸ້ມຄອງ, ການນຳພາເຫລົ່ານີ້ເປັນຕົ້ນ..

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ພບຢ 8:11-14,17-18

1. ທ່ານຢາໂກໂບ ໄດ້ແນະນຳໃຫ້ທ່ານຈົດຈຳສິ່ງທີ່ພຣະເຈົ້າຊົງນຳພາທຸກປະການຢ່າງໃດ? ( ຢກບ 1:17)
2. ມີສິ່ງໃດທີ່ທ່ານຍັງບໍ່ໄດ້ຖວາຍກຽດແດ່ພຣະເຈົ້າ?
3. ທ່ານຄິດວ່າພຣະເຈົ້າຈະມີຄວາມຮູ້ສຶກຢ່າງໃດໃນເມື່ອພວກເຮົາບໍ່ໃຫ້ກຽດພຣະອົງໃນເວລາທີ່ພຣະອົງຊ່ອຍພວກເຮົາ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>

- ການຕີສອນຂອງພຣະເຈົ້າມີຄວາມໝາຍຄວາມວ່າ ຜູ້ທີ່ເຊື່ອຕ້ອງປະຕິບັດຕາມ.
- ເພາະວ່າພຣະປະສົງຂອງພຣະເຈົ້ານັ້ນດີ ແລະສຳຄັນຍິ່ງ ທຸກສິ່ງທຸກຢ່າງຈະກັບກາຍມາເປັນດີຕໍ່ຜູ້ທີ່ເຊື່ອໄວ້ວາງໃຈດ້ວຍສຸດຈິດສຸດໃຈ.
- ທຸກສິ່ງທີ່ດີທີ່ຜູ້ທີ່ເຊື່ອໄວ້ວາງໃຈໄດ້ຮັບ ແລະສິ່ງຂອງທຸກຢ່າງທີ່ໄດ້ຮັບນັ້ນກໍຍ້ອນພຣະຄຸນ ແລະພຣະກະຣຸນາຂອງຄວາມຮັກຂອງພຣະເຈົ້າ.

**<u>ສລຸບ</u>:**

- ທ່ານຈະຮັບເອົາຄວາມຈົດຈຳວ່າພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າ ແລະເປັນຜູ້ທີ່ເຊື່ອໄວ້ວາງໃຈໃນພຣະອົງຢ່າງສຸດຈິດສຸດໃຈຂອງທ່ານ?

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ. www.lsbf.org. by JH